ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

0636 . . .

ເລກທີ................./ອຄ.ກຂອ

ນະຄອນຫຼວງວຽງຈັນ, ວັນທີ .10.. ມິຖຸນາ 2019

# ຂໍ້ຕົກລົງ

## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ ຕາມອະນຸສັນຍາສະບັບປັບປຸງ ພາຍໃຕ້ເຂດການຄ້າເສລີ ອາຊຽນ - ສປ ຈີນ

- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍແຫຼ່ງກຳເນີດສິນຄ້ານຳເຂົ້າ ແລະ ສົ່ງອອກ, ສະບັບເລກທີ 228/ນຍ, ລົງວັນທີ 22 ເມສາ 2010;
- ອີງຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ກ່ຽວກັບ ເຫັນດີຮັບຮອງເອົາອະນຸສັນຍາ ເພື່ອປັບປຸງຂອບສັນຍາວ່າດ້ວຍການຮ່ວມມືເສດຖະກິດຮອບດ້ານ ແລະ ບາງສັນຍາທີ່ກ່ຽວຂ້ອງພາຍໃຕ້ຂອບ ສັນຍາ ລະຫວ່າງ ອາຊຽນ ແລະ ສປ ຈີນ ສະບັບເລກທີ 929/ຫສນຍ.ກໜ, ລົງວັນທີ 05 ກໍລະກົດ 2016;
- ອີງຕາມການສະເໜີຂອງ ກົມການນຳເຂົ້າ ແລະ ສົ່ງອອກ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1.** ປະກາດໃຊ້ລະບຽບແຫຼ່ງກຳເນີດສິນຄ້າ (Rules of Origin: ROO), ຂັ້ນຕອນການອອກໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (Operational Certification Procedures: OCP), ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ (ຟອມ E) ແລະ ລະບຽບສະເພາະຜະລິດຕະພັນ (Product Specific Rules: PSR) ທີ່ເປັນສາລະບານສິນຄ້າລະບົບເອກະພາບປີ 2017 (HS 2017) ຕາມອະນຸສັນຍາສະບັບປັບປຸງ ພາຍໃຕ້ເຂດການຄ້າເສລີ ອາຊຽນ - ສປ ຈີນ.

**ມາດຕາ 2.** ມອບໃຫ້ ກົມການນຳເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນຳ ແລະ ເຜີຍແຜ່ວິທີຈັດຕັ້ງປະຕິບັດລະອຽດກ່ຽວກັບ ລະບຽບດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ຖືກປະຕິບັດຢ່າງໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ສິງຫາ 2019 ເປັນຕົ້ນໄປ.

ລັດຖະມົນຕີ

ກະຊວງອຸດສາຫະກຳ ແລະ ການຄ້າ

ລັດຖະມົນຕີ

ປ ເຂັມມະນີ ພົນເສນາ